# ບົດ ແລະ ເງື່ອນໄຂການເສບຊົມບົດ ໜຶ່ງໃນບັນຫາສ້າງຄວາມສະຫງວນມັກ ແລະ ສືບສານ

15

ຣ.ສ. ດຣ. ມະຫາ ບົວລີ ປະພາພັນ

ພາຍຫລັງ ໄດ້ດຳເນີນການເກັບກຳຄັ້ງຍິ່ງໃຫຍ່ມາຮອດໄລຍະທ້າຍ, ບັນຫາໃໝ່ໄດ້ເກີດຂຶ້ນ: ຄວາມຫລາຍສັນສີ ແລະ ອຸດົມສົມບູນທັງດ້ານເນື້ອໃນ ແລະຮູບການປະດິດແຕ່ງອັນມີລັກສະນະຊາດທີ່ທ້ອນທອມມາໄດ້ນີ້ຈະໄດ້ຮັບການສືບທອດ ແລະພັດທະນາແນວໃດ. ຄວາມກັງວົນທີ່ຄວນກັງວົນ ອັນນີ້ຈະໄດ້ຮັບການແກ້ໄຂຢ່າງໃດໃຫ້ສົມທີ່ຄວນເປັນ. ຫລາຍຄົນກໍມັກຈະໂຍນຄວາມຜິດໃຫ້ຄົນຮຸ່ນສືບທອດ, ຫາວ່າຂະເຈົ້າ ບໍ່ສົນຫລືບໍ່ຫົວຊາຫານັບນຳວຽກການສຶກສາມໍລະດົກໃດຂອງຊາດ ເມົາແຕ່ແລ່ນນຳບັນຫາເສດຖະກິດ ປາກທ້ອງສະເພາະໜ້າ. ຄວາມຈິງແມ່ນໜັງສືມໍລະດົກໃດໆກະຕາມ, ມັນຈະໄດ້ຮັບການສືບທອດ ກ່ອນອື່ນໝົດ ກໍຕໍ່ເມື່ອມີສິ່ງນັ້ນ ແລະ ສິ່ງນັ້ນ ກໍຕ້ອງໄດ້ຮັບສຳຜັດທັງສະແດງອອກໄດ້ ສ່ວນທີ່ມີປະໂຫຍດ ດ້ານໃດ - ດ້ານນຶ່ງ.

## ລັກສະນະ ແລະ ບົດບາດໜັງສື

ໜັງສືອັນເປັນມໍລະດົກທີ່ພວກເຮົາກຳລັງກ່າວເຖິງນີ້ ແມ່ນໜັງສືທີ່ໄດ້ກຳເນີດ ແລະ ສືບທອດກັນມາແຕ່ເນີນນານ. ມັນໄດ້ພັດທະນາ ແລະຂະຫຍາຍໂຕສູງໃນສະໄໝກາງຫາທ້າຍຂອງອານາຈັກລ້ານຊ້າງ ເອກະພາບ. ໜັງສືທີ່ວ່າໄດ້ເປັນຄັງຄວາມຮູ້ຂອງບັນພະບູລຸດລາວ. ມີຫລາຍປະເພດທັງທີ່ເປັນປະເພດ ຄະດີໂລກ ແລະ ຄະດີທຳ. ຜ່ານໜັງສືນີ້, ພວກເຮົາສາມາດຮຽນຮູ້ຫລັກທຳຄຳສອນ, ຄວາມຮູ້ທົ່ວໄປ, ຈາຣີດປະເພນີຄວາມເຊື່ອຖື, ກົດໝາຍການປົກຄອງ, ໂຫລາສາດ - ດາລາສາດ, ຫລັກ ແລະການໃຊ້ພາສາ ຕະຫລອດບົດສູດ ແລະ ເວດມົນກົນຄາຖາຕ່າງໆ.

ຮູບແບບການແຕ່ງກໍມາກແບບຫລາຍສີ. ປະເພດທີ່ເປັນວັນນະຄະດີເຊັ່ນ: ພວກນິທານ, ເທບນິຍາຍ, ສານ, ຄຳສອນ... ນິຍົມຂຽນໃນຮູບຮ້ອຍກອງ; ປະເພດທີ່ເປັນຕຳລາວິຊາການເຊັ່ນ: ຕຳນານ, ດາລາສາດ -ໂຫລາສາດ, ບັ້ງຈຸ້ມ, ລະບຽບກົດໝາຍ... ມັກຈະຂຽນເປັນຄຳຮ້ອຍແກ້ວ. ເບິ່ງໂດຍໂຮມແລ້ວ ໜັງສືສ່ວນໃຫຍ່ຈະແຕ່ງອອກໃນຮູບຮ້ອຍກອງ ເວັ້ນເສຽແຕ່ເປັນເລື່ອງ ທີ່ເລັງວິຊາການລ້ວນໆອີ່ຫລີ່ ຈິ່ງປະກົດເຫັນມີການຂຽນ

ແບບຮ້ອຍແກ້ວ. ສັນທະລັກສະນະທີ່ນິຍົມແມ່ນກາບກອນ ແລະໂຄງ. ເຖິງປານນັ້ນກໍຕາມ ອັນເນື່ອງຈາກຄວາມນິຍົມສະໄໝນັ້ນ ເຮົາຈະເຫັນວ່າ ແມ່ນແຕ່ບົດທີ່ເປັນຕຳລາແທ້ໆ ກໍຍັງປາກົດເຫັນມີຈຳນວນບໍ່ໜ້ອຍທີ່ຂຽນໃນຮູບຮ້ອຍກອງ (ຊື່ທິດທັງແປດ, ປະຫວັດວຽງຈັນ, ຕຳລາ ຮຽນເລກທາງໝາ...). ຫລືບໍ່ກໍບົດໃນລັກສະນະນີ້ ຈະເຫັນມີຂຽນໃນທັງສອງແບບໃນລະດັບຕ່າງກັນເຊັ່ນ: ທັງພື້ນວຽງ(ອະນຸ) ແລະ ພື້ນວຽງ (ທ້າວເຫລົາຄຳ) ລ້ວນແຕ່ກ່າວເຖິງປະຫວັດວຽງຈັນ, ແມ່ນຢູ່ວ່າມັນ ກ່າວເຖິງບັນຫາດຽວກັນ, ຫາກອັນໜຶ່ງຂຽນໃນລັກສະນະນີ້, ອີກອັນຂຽນລັກສະນະອື່ນ. ຄວາມຜູກພັນ ແໜ້ນດັ່ງກ່າວ ຈຶ່ງຍາກແກ່ການຈຳແນກອັນເປັນຕຳລາ ແລະ ວັນນະຄະດີ ຫລື ອັນໃດແມ່ນຕຳລາສົດ, ອັນໃດແມ່ນບັນເທີງຄະດີ ແລະ ສາລະຄະດີ, ການຂຽນແບບນີ້ ນອກຈາກສະແດງອາລົມຈິດໄດ້ຢ່າງ ລະອຽດອ່ອນ, ສ້າງຄວາມສະເທືອນໃຈໄດ້ສູງ ແລ້ວມັນຍັງຊ່ວຍໃຫ້ຜູ້ຟັງຈົດຈຳໄດ້ງ່າຍ, ຍ້ອນແນວນັ້ນ, ມັນຈຶ່ງເປັນທີ່ນິຍົມຊົມຊອບ ແລະ ສືບຕໍ່ໄຕ່ກັນມາຕາມສະພາບອຳນວຍ

ມັນເປັນທີ່ນິຍົມຊົມຊອບກໍຍ້ອນມັນມີປະໂຫຍດຕໍ່ຜູ້ຄົນໃນສັງຄົມ :

- ສະໜອງຄວາມຮູ້ແບບທຳມະຊາດແກ່ຜູ້ເສບ ຄື ທັງໃຫ້ຄວາມຮູ້ ແລະ ຄວາມມ່ວນຊື່ນ
- ສ່ອງແສງໃຫ້ເຫັນສະພາບການດຳລົງຊີວິດ ແລະ ບົດຮຽນຂອງຄົນໃນສັງຄົມ
- ເປັນ ແລະ ໃຫ້ໂຕເລືອກຢ່າງເສລີໃຈແກ່ຜູ້ເສບ ໃນການຊອກທີ່ເພິ່ງ ແລະ ສ້າງກໍ່ອຸດົມການ
- ສະແດງ ແລະເປັນສາຍເສັ້ນເກາະຍຶດຄວາມເປັນສັງຄົມຮ່ວມຂອງຊາດ ບໍ່ວ່າດ້ານໂສພະນີຍະສິນ ກໍຄື ແບບແຜນວິຖີຊີວິດ

## ການສຶກສາຄົ້ນຄວ້າ

ເລີ່ມແຕ່ທ້າຍສະຕະວັດທີ 19 ມາ, ຂະບວນການຕື່ນຕົວ ໃນການທ້ອນໂຮມໜັງສືເກົ່າແກ່ໄວ້ ໄດ້ກໍ່ໂຕຂຶ້ນ. ຄຽງຄູ່ກັບການສ້າງໂຮງຮຽນລັດ ທີ່ທາງການຝະລັ່ງໄດ້ຕັ້ງຂຶ້ນ, ໂຮງຮຽນພະປະລິຍັດຕິທຳ (ໂຮງຮຽນສົງ) ກໍໄດ້ດຳເນີນການສິດສອນ ແລະພັດທະນາໂຕ. ວັດຈັນໄດ້ກາຍເປັນສູນສຶກສາລວມ ຂອງທາງການລາວໄປໃນໂຕ ໂດຍແມ່ນຍາພໍ່ມະຫາແກ້ວເປັນກົກ. ຕໍ່ມາກໍຍາພໍ່ມະຫາສີລາ ວີຣະວົງສ໌ ແລະ ຜູ້ອື່ນໆຕາມລຳດັບມາ. ເມື່ອທ່ພະສະໝຸດສະພາຈັນທະບຸລີ ໄດ້ຮັບການແຕ່ງຕັ້ງ, ມັນໄດ້ໄຂສັງກາດໃຫ້ໂສມໜ້າການສຶກສາລາວ ມີທ່າຫວັງໃໝ່, ເປັນໜໍ່ແໜງໃຫ້ແກ່ການສຶກສາ ກ່ຽວກັບລາວຄະດີສຶກສາ, ແບບຮຽນພາສາວັນນະຄະດີລາວໄດ້ຮັບການຮຽບຮຽງປັບປຸງ, ໜັງສືສຳຄັນໆ ໄດ້ຮັບຄວາມເອົາໃຈໃສ່, ກອງວັນນະຄະດີ, ຄະນະກຳມະການວັນນະຄະດີ, ໄດ້ອອກວາລະສານ, ໄດ້ຊຳຣະໜັງສືອັນເປັນພື້ນຖານ ກ່າຍຖອດອອກເປັນອັກສອນສະໄໝ ເຜີຍແຜ່

ໃຫ້ມວນຊົນໄດ້ສຳຜັດ ຈົນກາຍເປັນລາດຊະບັນດິດສະພາລາວ. ເມື່ອເກີດການຜັນແຍກອອກເປັນສອງກຸ່ມການເມືອງ ໃນການກອບກູ້ເອກະລາດແຫ່ງຊາດ, ແຕ່ລະຝ່າຍກໍໄດ້ເອົາໃຈໃສ່ວຽກງານດ້ານນີ້

ພໍແຕ່ ມະຫາວິທະຍາໄລກຳເນີດຂຶ້ນ ແຕ່ລະຝ່າຍ, ໂດຍສະເພາະແມ່ນມະຫາວິທະຍາໄລໃນເຂດປົດປ່ອຍ ໄດ້ນຳເອົາໜັງສືແຫ່ງຊາດເຂົ້າບັນຈຸເປັນນຶ່ງໃນຫລັກສູດທັນທີໂລດ, ເຖິງວ່າຈະແຕກຕ່າງກັນໃນທັດສະນະ, ແຕ່ທັງສອງສຳນັກການສຶກສາ ກໍມີຈຸດເລັງດຽວກັນຄືສຶກສາໜັງສືລາວ. ໃນຂະນະທີ່ມະຫາວິທະຍາໄລສີສະຫວ່າງວົງ[1] ໜັກໃນທາງສຶກສາຕາມມູນເຊື້ອ, ເອົາໃຈໃສ່ສຶກສາສັບ, ຈາຣິດປະເພນີ ວາດດຳລົງຊີວິດສະແດງອອກໃນບົດ ແລະສ່ວນໜຶ່ງຂອງນາມສັນຍະລັກ, ພ້ອມທັງການຈັດປະເພດໃນວົງກ້ວາງ, ມະຫາວິທະຍາໄລໃນເຂດປົດປ່ອຍ[2] ຜັດເລັງສຶກສາເນື້ອໃນການສ່ອງແສງ ແລະສຶກສາບົດບາດອິດທິພົນ ແລະ ຕີລາຄາຜົນສະທ້ອນຂອງບົດວັນນະຄະດີຕໍ່ສັງຄົມ, ພ້ອມດຽວກັນນັ້ນກໍຈັດປະເພດວັນນະຄະດີອອກໄປ ຕາມແຕ່ລະຍຸກສະໄໝສັງຄົມ ເພື່ອໃຫ້ສະດວກແກ່ການສຶກສາເຖິງທາດແທ້ຂອງບົດ, ແນ່ນອນ ບົດວັນນະຄະດີພື້ນເມືອງ, ວັນນະຄະດີລ້ານຊ້າງ ແລະວັນນະຄະດີສະໄໝປັດຈຸບັນ ຈະມີອຸດົມການເປົ້າໝາຍວິທີການສ່ອງແສງແຕກຕ່າງກັນ

ໃນສ່ວນບຸກຄົນ ເຖິງວ່າມີໜ້ອຍ ແຕ່ກໍຜາກົດວ່າ ພວກເພິ່ນໄດ້ອຸທິດເຫື່ອແຮງໃນດ້ານນີ້ ຢ່າງເປັນທີ່ສັນລະເສີນຍິ່ງ, ພວກເຮົາຍັງມີໜັງສືລາວ ເປັນຂອງລາວໄດ້ສຶກສາ ຢູ່ໃນເວລານີ້ ເກີດໄດ້ຈາກພະຄຸນອັນລົ້ນເກົ້າລົ້ນຂະໜ່ອມ ດ້ວຍສາຍຕາອັນເບິ່ງກວ້າງມອງໄກຂອງ ສະເດັດເຈົ້າມະຫາອຸປະຮາດເພັດຊະລາດ ອົງນາຍົກທຳພະສະພາຈັນທະບຸລີ, ບົດວັນນະຄະດີສຳຄັນໆຂອງຊາດ ຟື້ນຊີບມາມີບົດບາດໃຫ້ຄົນຮຸ່ນຕໍ່ໆມາໄດ້ເຫັນຄວາມສຳຄັນ ຜ່ານມັນສະໝອງອັນບໍ່ຮູ້ອິດອ່ອນ ຂອງຍາພໍ່ມະຫາສີລາ ວິລະວົງ. ທ່ານບໍ່ພຽງແຕ່ຢິບຍົກບົດວັນນະຄະດີ ອອກມາໃຫ້ພວກເຮົາເຫັນຄວາມສຳຄັນ ຫາກຍັງໄດ້ສ້າງເຄື່ອງມື ແນະແນວການສຶກສາໃຫ້ພວກເຮົາດຳເນີນຕໍ່. ນັ້ນແມ່ນຄູອະມະຕະ ບັນພະບຸລຸດຜູ້ປະເສີດ, ຄັນວ່າບໍ່ເປັນການດ່ວນຕີລາຄາສູງເກີນໄປ, ແບບແຕ່ງກອນໄທວຽງຈັນແມ່ນຜົນການສັງລວມ ລັກສະນະຮູບແບບຊື່ ແລະຫລັກການໃນການແຕ່ງກອນຂອງບັນພະບຸລຸດໄດ້ສ້າງໄວ້ ທີ່ຢູ່ກະແຈກກະຈາຍ ໃຫ້ເຂົ້າເປັນລະບົບລະບຽບຢ່າງດີເລີດ, ການເຮັດໄດ້ແນວນັ້ນມັນບໍ່ແມ່ນທຳມະດາ, ແມ່ນອັດສະລິຍະລັກທີ່ຫາໄດ້ຍາກຍິ່ງ ແທ້, ເປັນບົດວິທະຍານິພົນທີ່ໂດດເດັ່ນ

---

[1] ຫລັກສູດພາສາລາວ ວັນນະຄະດີລາວ, ພະແນກອາຈານລາວ, ສະຖາບັນອຸດົມສຶກສາວິຊາຄູ, ມະຫາວິທະຍາໄລສີສະຫວ່າງວົງ

[2] ຫລັກສູດ ວັນນະຄະດີລາວ, ພະແນກວັນນະຄະດີ - ພາສາລັດເຊຽ. ມະຫາວິທະຍາໄລສ້າງຄູວຽງໄຊ

ຖືລັກສະນະແວກແນວ, ທັງເປັນກະແຈຄຳໄຂປະຕູສູ່ວົງການໜັງສືແຫ່ງຊາດ. ໃນຖານນະລູກ ແທນພໍ່ໜໍ່ແທນລໍາ, ດວງເດືອນ ບຸນຍະວົງ ກໍໄດ້ກໍາເນີນການຄົ້ນຄວ້າ ເຈາະເລິກເລື່ອງ ທ້າວຮຸ່ງທ້າວເຈືອງ ຕໍ່ຈາກຜູ້ເປັນພໍ່ທີ່ໄດ້ວາງພື້ນຖານໄວ້ໃຫ້. ໂລກຕາເວັນຕົກໄດ້ຮູ້ ກ່ຽວກັບວັນນະຄະດີລາວ ຈາກການຄັດປັ່ນແປເລື່ອງສິນໄຊເປັນພາສາຝະລັ່ງ ຂອງທ່ານທຍຸຍ ອະໄພ ແລະ ຜູ້ອື່ນໆ. ພວກເຮົາຄົນຮຸ່ນສືບທອດໄດ້ສຳ ຜັດລົດຊາດໜັງສືມູນຜ່ານນ້ຳມື ແລະປາຍປາກກາ ຂອງທ່ານ ທ້າວເກນ, ອະດີດນິດສິດນັກສຶກສາສະຖາບັນການສຶກສາຊັ້ນສູງສົງຍັງຈົດຈຳອາຈານ ຄໍາແດງ ອາຈານສອນກະວີ ທີ່ຫາໂຕຈັບໄດ້ຍາກຜູ້ໜຶ່ງ, ແລະບົດຮຽນອັນມີປະໂຫຍດ ໃນການຕີກອນຂອງ ທ່ານອາຈານ ບຸນຍົກ ແສນສູນທອນ. ໜັງສືລາວໄດ້ມີ ການຈັດປະເພດຂຶ້ນບັນຊີ ແລະ ໄຂທາງວິໄຈວິຈານບົດເບື້ອງຕົ້ນ, ຍົກໃຫ້ເຫັນຄຸນຄ່າ ຂອງໜັງສືເພື່ອປະໂຫຍດແກ່ການສຶກສາໂດຍ ທ່ານຄຳແພງເກດຕະວົງ. ການເຮັດແນວນັ້ນ ໄດ້ຊ່ອຍໃຫ້ພວກເຮົາເບິ່ງບັນຫາຢ່າງມີວິຊາການ, ໃຊ້ເກນມາຈຳແນກ ອັນໃດແມ່ນໜັງສືພື້ນເມືອງ ອັນໃດແມ່ນຊາດົກ ແລະ ແຕ່ລະປະເພດມີຄຸນລັກສະນະພິເສດ ຄື ແລະຕ່າງກັນແນວໃດເຊັ່ນ: ຍ້ອນອັນໃດ ອັນນີ້ຈຶ່ງຮຽກວ່ານິທົມ ແລະອັນນັ້ນຜັດວ່ານິທານ, ໃນເວລາດຳເນີນ ການສະເໜີບົດວັນນະຄະດີສະໄໝລ້ານຊ້າງ, ອາຈານທອງຊຽນ ລາດວົງສາ ອາຈານສອນວິຊານີ້ ຜູ້ທຳອິດ ຂອງມະຫາວິທະຍາໄລສ້າງຄູນາຄາວ ໄດ້ຂຸດຄຸ້ຍໃຫ້ພວກເຮົາ ເຫັນເງື່ອນໄຂການເປັນບຸກຄົນ ອຸດົມລະຕິຂອງຊົນຊັ້ນສັກດີນາລາວ ຜ່ານຈາກການວິເຄາະໂຕລະຄອນເອກ ຂອງບົດເລື່ອງເດັ່ນໆຂອງ ໜັງສືສະໄໝອານາຈັກລ້ານຊ້າງ. ທ່ານໄດ້ຍົກໃຫ້ເຫັນເກນ ຫລື ເງື່ອນໄຂບຸກຄົນ ອຸດົມລະຕິໄວ້ດັ່ງນີ້ :

1. ຊື່ສັດສຸດຈະລິດ ຈົງຮັກພັກດີ ຕໍ່ວົງຕະກຸນ
2. ມີຄວາມເກັ່ງກ້າສາມາດ, ມີວິຊາອາຄົມ (ວິລະບຸບຸດ)
3. ມີນ້ຳໃຈມຸມານະ ສາມາດຜ່ານຜ່າທຸກອຸປະສັກຫຍຸ້ງຍາກ
4. ເຮັດວຽກງານ ໂດຍບໍ່ຮຽກຮ້ອງຄຸນຄ່າ

ນອກຈາກນັ້ນ ກໍຍັງຍົກໃຫ້ເຫັນບົດບາດຂອງແມ່ຍິງ. ແມ່ຍິງເປັນຮູບພາບໃຈກາງຂອງວັນນະຄະດີສະໄໝທີ່ວ່ານີ້, ການຄົ້ນພົບຊອກເຫັນບັນຫາດັ່ງກ່າວ ແມ່ນເລື່ອງແປກໃໝ່ອັນໜຶ່ງ ທີ່ໜ້າສົນໃຈ ແລະ ມີຄວາມໝາຍສຳຄັນໃນວົງການສຶກສາວັນນະຄະດີລາວ. ມັນແມ່ນບາດກ້າວໃໝ່ໃນວົງການຄົ້ນຄ້ວາ ທັງເປັນການເບີກສາຍຕາຊ່ວຍແນະ ແລະໄຂກວ້າງທັດສະນາການຫລືຈຸດການເບິ່ງ ໃຫ້ພວກເຮົາໃນເວລາສຶກສາວັນນະຄະດີແຫ່ງຊາດ.

ໜັງສືອັນເປັນມໍລະດົກ, ຜົນງານການສຶກສາຄົ້ນຄວ້າ ຂອງບັນດານັກປາດອາຈານທັງຫລາຍ ທີ່ກ່າວມາ ແລະຜູ້ອື່ນໆທີ່ບໍ່ທັນໄດ້ຍົກມາກ່າວໃນທີ່ນີ້ ເປັນສິ່ງປະດັບສະຕິປັນຍາພວກເຮົາ, ພວກເຮົາໄດ້ສືບທອດສານຕໍ່ກັນມາ ແລະຮັກຄວາມເປັນຊາດທະນົງກຽດໃນຄວາມເປັນລາວ ສ່ວນໜຶ່ງທີ່ບໍ່ປະຕິເສດໄດ້ ແມ່ນໄດ້ມາຈາກບັນຫານີ້. ພາກວິຊາພາສາລາວ ໃນຖານະມີສ່ວນຮັບຜິດຊອບຕໍ່ວຽກງານດ້ານນີ້ ແລະ ທັງເປັນຜູ້ສືບທອດສານຕໍ່ຈາກພະແນກອາຈານລາວ, ສະຖາບັນອຸດົມສຶກສາວິຊາຄູ, ມະຫາວິທະຍາໄລ ສີສະຫວ່າງວົງ; (ເປັນພະແນກອັກສອນສາດລາວ, ໂຮງຮຽນສ້າງຄູຊັ້ນສູງດົງໂດກວຽງຈັນ) ແລະຈາກພະແນກວັນນະຄະດີ-ພາສາລັດເຊຍ, ມະຫາວິທະຍາໄລສ້າງຄູນາຄາວ ແລະເມື່ອສອງມະຫາວິທະຍາໄລ ສ້າງຄູວຽງໄຊ ມາປະສົມກັບໂຮງຮຽນສ້າງຄູວຽງຈັນ, ມັນໄດ້ເປັນພະແນກວັນນະຄະດີ - ພາສາສາດໃນ ສັງກັດພະແນກໃຫຍ່ວັນນະຄະດີ - ພາສາຕ່າງປະເທດ ມະຫາວິທະຍາໄລສ້າງຄູວຽງຈັນ ກໍໄດ້ດຳເນີນການສິດສອນການຄົ້ນຄວ້າໜັງສືສະໄໝນີ້. ວັນນະຄະດີລ້ານຊ້າງ[3] ກິນອັດຕາສ່ວນຫລາຍກວ່າໝູ່ ໃນປະມວນວິຊາວັນນະຄະດີລາວ ທີ່ສຶກສາກັນຢູ່ໃນພາກວິຊາ. ສະເພາະຢ່າງຍິ່ງ ໃນໄລຍະກຽມການ ສ້າງຕັ້ງມະຫາວິທະຍາໄລແຫ່ງຊາດ, ພາກວິຊາໄດ້ສ້າງພື້ນຖານໜັນທິດ ຈາກການທຳໜ້າທີ່ ພຽງແຕ່ ສ້າງຄູ ມາເປັນທັງສ້າງບັນດິດທົ່ວໄປ ສຳລັບວິຊາພາສາ ແລະວັນນະຄະດີລາວ ໂດຍການຊອກແຫລ່ງທຶນມາຄົ້ນຄວ້າເປັນໂຕແບບ. ໜັງສືກາບເມືອງພວນ, ສານລຶບພະສູນ ແລະ ພື້ນວຽງ ຖືກຍົກຂຶ້ນມາ ພິຈາລະນາເປັນອັນດັບປັກແຮກ. ໜັງສືດັ່ງກ່າວເກີດໃນສະໄໝບໍ່ໃກ້ ແລະກໍ່ບໍ່ໄກຈາກພວກເຮົາ, ທັງມີຜົນ ໃຫ້ແກ່ການສະໜອງຕອບຕໍ່ໜ້າທີ່ອັນຮີບດ່ວນ ໃນພາລະກິດການສ້າງຊັບພະຍາກອນມະນຸດ, ສ້າງສະຕິຊາດ ແກ່ຜູ້ຄົນໄວຄະນອງ - ໄວສືບທອດ. ພວກເຮົາພະຍາຍາມສຶກສາວັນນະຄະດີ ໃຫ້ຫລາຍຮູບ ຫລາຍສີ, ຫລິງເຫັນວ່າການສຶກສາວັນນະຄະດີຕາມທິດສະດີ ການຊຳຮະບົດຂອງຟອນມັດ ແມ່ນແງ່ມຸມໜຶ່ງ ທີ່ແທດເໝາະກັບການສຶກສາໜັງສືເກົ່າໆ ທັງມີປະໂຫຍດ ແລະປະໂຫຍດນັ້ນກໍສະແດງອອກໃນການ ນຳມາຄົ້ນຄ້ວາໜັງສືພະລະສັງຂະຫຍາ ໂດຍທ່ານ ສາດສະດາຈານ ດຣ. ຣະຣັນຣົນດິອຸດສ໌, ຄະນະພວກ ເຮົາ ຈິ່ງຕົກລົງນຳເອົາບົດຮຽນໃນການພູນໃຊ້ ທິດສະດີຂອງ ຟອນມັດ ສົມທົບກັບບົດຮຽນການສຶກສາ ວັນນະຄະດີທີ່ເຄີຍເຮັດຢູ່ໃນພາກວິຊາ ລອງມາສຶກສາວັນນະຄະດີລາວສາມເລື່ອງທີ່ກ່າວມາຂ້າງເທິງ. ເຖິງວ່າການສຶກສາຄັ້ງນີ້ ບໍ່ຕອບສະໜອງໄດ້ຄົບຕາມຫລັກຂອງເຈົ້າທິດສະດີ ອັນເນື່ອງມາຈາກ ບັນຫາໃນການເກັບກຳຂໍ້ມູນ ແລະບົດຮຽນໃນການຄົ້ນຄວ້າຂອງຄະນະພວກເຮົາ, ແຕ່ກໍເຊື່ອແນ່ວ່າມັນມີປະໂຫຍດ, ໜ້ອຍສຸດກໍເປັນເອກະສານເພື່ອການວິຈານ. ການຄົ້ນຄວ້າໄດ້ລົງມືດຳເນີນໂຕຈິງ ຕາມຂັ້ນຕອນດັ່ງນີ້ :

---

[3] ຫລັກສູດ ພາສາລາວ - ວັນນະຄະດີ "ໝ, ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ.

1. ເກັບກຳໜັງສືທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດເທົ່າທີ່ສາມາດຊອກໄດ້.
2. ກ່າຍຖອດອັກສອນ ຈາກຕົ້ນສະບັບຕ່າງໆທີ່ເກັບມາໄດ້ ອອກມາເປັນອັກສອນລາວສະໄໝ.
3. ດຳເນີນການ ທຽບຕົ້ນສະບັບທີ່ເກັບກຳມາໄດ້ ເພື່ອສຶກສາຫາສະບັບເຄົ້າຂອງຕົ້ນສະບັບທັງຫລາຍ ແລະດຳເນີນການຊຳຣະສ້າງສະບັບທີ່ສົມບູນກວ່າ ທີ່ຮຽກກັນວ່າສະບັບສະຖາປະນາ.
4. ສຶກສາປະຫວັດບົດ ຈາກແຫຼ່ງເອກະສານທີ່ກ່ຽວຂ້ອງ ທັງໃນກຸ່ມວັນນະຄະດີ ແລະ ປະຫວັດສາດ ຫລື ໜັງສືອື່ນໆທີ່ມີສ່ວນພົວພັນເຖິງ,
5. ຖອດຄວາມຕາມຄວາມໝາຍຄຳ ຈາກຄຳກອນມາເປັນຄວາມເວົ້າທຳມະດາ,
6. ພ້ອມນັ້ນ ກໍສັງເກດຄຸນລັກສະນະຈຸດພິເສດ ຂອງບົດໃນແຕ່ລະດ້ານ ທັງຮູບການ ແລະເນື້ອໃນ ຫລືຈຸດພິເສດອື່ນໆ.
7. ຕີຄວາມບົດ ເພື່ອເຂົ້າໃຈເນື້ອໃນໃຈຄວາມກົງ ທີ່ຜູ້ຂຽນເວົ້າອອກໃນບົດ.
8. ຕີລາຄາບົດ ເພື່ອເຫັນຄຸນຄ່າ ຜົນຊ້ອນແຝງ ແລະ ເບື້ອງໜ້າ ເບື້ອງຫລັງຂອງບົດ.

## ການເສບບົດ ແລະ ເງື່ອນໄຂການເສບບົດ

### ກ. ການເສບ

ຄືດັ່ງທີ່ໄດ້ສະເໜີມາ, ບົດຮຽນໂຕຈິງ ໃນການທີ່ພວກເຮົາສາມາດສືບທອດມໍລະດົກດ້ານນີ້ ແມ່ນໄດ້ຈາກການທີ່ໄດ້ສຳຜັດກັບບົດ ບໍ່ທາງກົງກໍທາງອ້ອມ. ການເສບໃນທີ່ນີ້ ໝາຍເຖິງການເຂົ້າໄປສຳຜັດກັບບົດ ອາດໂດຍການອ່ານ ການຟັງ ການຊົມ. ຜ່ານຈາກການເສບ, ຜູ້ເສບຈະໄດ້ຮູ້ເຫັນ ແລະຮັບສິ່ງບັນຈຸ ຫລື ອິດທິລິດຂອງໜັງສືປະເພດນັ້ນໆ ໃນລະດັບຕ່າງກັນ. ສິ່ງເຫລົ່ານັ້ນໄດ້ແກ່ :

1. ຄວາມມີສີນ ( ຄ່າດ້ານສິລະປະກຳ )
2. ເນື້ອໃນ ( ອັດຖະທຳ )
3. ຄວາມມີຄຸນຄ່າ ( ບົດຮຽນ ຫລື ຜົນດ້ານຈັນຍາທຳ )

ຄ່າຂອງໜັງສືວັນນະຄະດີ ປົ່ນອ້ອມໃນສາມບັນຫາທີ່ກ່າວມານີ້. ລະດັບຄວາມສົມເພາະ ຂອງບັນຫາຕົ້ນຈະຍັງຜົນໃຫ້ບັນຫາທ້າຍ, ຄວາມມີປະໂຫຍດໜ້ອຍຫລາຍ ຂຶ້ນກັບການຊີ້ງຄ່າຂອງໜັງສື. ຄ່ານິຍົມ ແລະການປ່ຽນແປງ ຂອງຜູ້ເສບ ຫລັງການເສບ.

ການເສບບົດ ຂຶ້ນກັບເງື່ອນໄຂລະດັບການຂະຫຍາຍໂຕຂອງເຄື່ອງມືທີ່ເປັນສື່ ແລະຜູ້ຄົນໃນສັງຄົມ, ການ ເສບບົດ ຜ່ານຫລາຍທາງ. ຜູ້ຮູ້ໜັງສືກໍອ່ານເອົາເອງ. ຜູ້ບໍ່ຮູ້ໜັງສືກໍອາໄສການຟັງ ການເລົ່າ ຫລືການໄດ້ຊົມລາຍການສະແດງຕ່າງໆ. ໃນຄາວບໍ່ທັນມີອັກສອນຈາລຶກ, ການສື່ງສານ ອາໄສການບອກເລົ່າກ່າວຂານ: ຜູ່ເລົ່າ - ຜູ່ຟັງ, ພໍ່ແມ່ ໂດຍສະເພາະແມ່ນພໍ່ເຖົ້າແມ່ນາຍ ມັກຈະເລົ່າບົດເລື່ອງຕ່າງໆ ສູ່ລູກຫລານຟັງ. ຄັນໄດ້ຜະລິດອັກສອນມາໃຊ້ ໜັງສືແລະການອ່ານມີສ່ວນປະກອບສຳຄັນໃນ ການສື່ງສານ ແລະຮັບສານ. ໃນເບື້ອງຕົ້ນ, ຄວາມຈຳກັດ ໜັງສືອ່ານມີຈຳນວນໜ້ອຍ, ຜູ່ອ່ານໃຫ້ຟັງ ⁄ ຜູ່ເລົ່າ - ຜູ່ຟັງ ເຂົ້າມາມີບົດບາດໃນການເສບບົດ ການສື່ງທອດສືບສານ ຂອງຄົນລາວໃນເມື່ອກ່ອນ ເຊັ່ນວ່າ ຟັງການ ເທດຂອງພະສົງໃນປາງ ບຸນຕ່າງໆ ແລະການອ່ານຂອງອາຈານໃນພິທີໃດນຶ່ງ ເຊັ່ນ ບຸນເຮືອນ, ວັນເຮືອນດີ, ເຮືອນກຳ ຫລື ບໍ່ກໍ່ຜ່ານຈາກການສະແດງສົດ ຈາກໝໍລຳ. ໝໍເຊີ້ງ... ຕາມປາງບຸນຕ່າງໆ. ເມື່ອການສຶກສາ ແລະອຸປະກອນຜະລິດສື່ຂະຫຍາຍໂຕ, ບົດບາດການອ່ານສູ່ກັນຟັງຫລຸດລົງ, ຂະບວນການການສຶກສາ ຜ່ານການອ່ານດ້ວຍຕົນເອງຄ່ອຍປາກົດໂຕ, ປັດຈຸບັນ ໂຕສື່ສານມີມາກມາຍຫລາຍຢ່າງ ທັງທັນ ສະໄໝ. ການກະຈາຍສຽງ, ກະຈາຍພາບຜ່ານວິທະຍຸ, ຍິ່ງເມື່ອອິນເຕີແນັດເຂົ້າມາມີບົດບາດຄືໃນສູ່ມື້ນີ້ ໄດ້ເຮັດໃຫ້ສະພາບດ້ານການສື່ ທັນປ່ຽນໄວເກີນຄາດຄິດ. ມັນໄດ້ສົ່ງຜົນໃຫ້ທຸກວຽກງານຈຳຕ້ອງໄດ້ ເສືອກສົນໂດດແລ່ນຕາມ. ຫາກໃຜເສີຍໆຢູ່ກໍຈະກາຍເປັນຜູ່ຈ້າໂດຍຂະເຍີມ. ການເສບບົດຍຸກນີ້ ກໍມີລັກສະນະໃໝ່ ສົມເໜາະກັບພາຫະນະ. ໂຕບົດກໍຈຳໄດ້ປັບບໍ່ດັ່ງນັ້ນ ກໍຈະກາຍເປັນອັນຕົກຫລ້າ, ໄດ້ຮັບຄວາມສົນໃຈໜ້ອຍ.

## ຂ. ເງື່ອນໄຂການເສບຊົມບົດ

**ສະພາບ :** ຜ່ານການດຳເນີນວຽກງານ ການສຶກສາໜັງສືສະໄໝນີ້ ພວກເຮົາໄດ້ພົບພໍ້ຫລາຍບັນຫາ, ໄດ້ປະສົບພົບເຫັນທັງອັນສະດວກ ແລະ ອຸປະສັກ. ອັນສະດວກ ໜັງສືທີ່ພວກເຮົານຳມາສຶກສາ ເປັນໜັງສືທີ່ບໍ່ໄກຈາກພວກເຮົາຫລາຍ. ສັບສຳນວນທີ່ໃຊ້ຢູ່ໃນບົດສ່ວນຫລາຍ ກໍຄຸ້ນຫູ ພໍຮູ້ໄດ້: ຫາກຕິດຂັດແທ້ໆ ກໍພໍມີຜູ້ຮູ້ຊ່ອຍແກ້ໄຂໃຫ້, ໝາຍຄວາມວ່າ ພວກເຮົາຍັງໂຊກດີມີນັກປາດອາຈານ ຜູ້ຮ່ຳຮູ້ເລື່ອງເກົ່າໆຢູ່, ໜັງສືເກົ່າຈຳນວນໜຶ່ງ ທີ່ໄດ້ຮັບການຍົກຂຶ້ນມາສຶກສາທາງຊຽງໃໝ່ (ພາກເໜືອ) ແລະພາກອິສານ (ພາກຕາເວັນອອກສຽງເໜືອ) ຂອງໄທ ກໍມີສ່ວນຊ່ອຍທາງອອກແກ່ພວກເຮົາ. ເຖິງປານນັ້ນ ກໍບໍ່ໄດ້ໝາຍຄວາມວ່າ ບໍ່ມີຂໍ້ຫຍຸ້ງຍາກ. ຂໍ້ຫຍຸ້ງຍາກ ເກີດມາຈາກຫລາຍປັດໄຈຄື :

- ເປັນໜັງສືເກົ່າ ຂຽນຕາມຮູບແບບນິຍົມກັນໃນສະໄໝນັ້ນ: ໜັງສືວັນນະຄະດີສ່ວນໃຫຍ່ ຂຽນເປັນບົດກອນ. ເວົ້າເຖິງກອນ ແມ່ນເວົ້າເຖິງອາລົມຈິດ, ຄວາມສະເທືອນໃຈ ຂອງຜູ້ກ່າວກອນມາ, ອາລົມຈິດແລະຄວາມສະເທືອນໃຈຂອງຜູ້ຄົນ ມີເທື່ອກໍມີລັກສະນະລວມ, ແຕ່ທີ່ຖືລັກສະນະສະເພາະ ກໍບໍ່ດ້ອຍໄປກວ່າອັນລວມ, ການທີ່ຈະສືບອາລົມພ້ອມບາດໃນສອງລັກສະນະນັ້ນ ຂອງຜູ້ອ່ານກອນ ບໍ່ແມ່ນຈະດຳເນີນປົກກະຕິສະເໝີໄປ. ອັນນີ້ ບໍ່ທັນເວົ້າເລື່ອງອາລົມຄ້ອຍຕາມ ຫລື ທວນທັດອັດກະແສ ທີ່ເກີດຂຶ້ນໃນເວລາອ່ານກອນ. ບາງສຳນວນໃນກອນ ມີອັນຕ່າງຈາກໃນພາສາປາກເວົ້າທຳມະດາ ໂດຍສະເພາະໃນດ້ານໂຄງສ້າງ. ການອ່ານກອນເພື່ອເຂົ້າໃຈແບບລວມໆຈະບໍ່ຄ່ອຍມີບັນຫາ. ແຕ່ເມື່ອອ່ານເພື່ອສຶກສາ, ມັນເກີດມີຫລາຍກໍລະນີທີ່ນັກອ່ານກອນນຳກັນ ຍາກຈະຕົກລົງເປັນເອກະພາບໄດ້ເຕັມສ່ວນ: ບໍ່ໜຳຊ້ຳ ມີບາງກໍລະນີຜິດເຫັນປີ້ນກັນ. ປາກົດການແນວນີ້ເກີດຂຶ້ນກັບການຖອດຄວາມ ແລະຕີຄວາມກະວີຂອງທຸກ ເຜົ່າຊົນ, ຈົນວ່ານັກທິດສະດີວັນນະຄະດີຫລາຍທ່ານ ໃຫ້ຄວາມເຫັນວ່າ ມັນເປັນ ແລະ ແມ່ນເລື່ອງທຳມະດາ. ແລະກໍອັນນີ້ເອງ ທີ່ຊ່ອຍໃຫ້ບົດກະວີມີ ມາກສັບຫລາຍສີ,

**- ມີຄຳສັບສູງ ບໍ່ສູ້ຄຸ້ນຫູ ໃຊ້ສັບທີ່ລັດຈ້ອນຄວາມ ແລະ ໂຕສັບ**: ສັບທີ່ພວກເຮົາມັກປະສົບຄວາມສັບສົນແມ່ນປະເພດສັບ ທີ່ເປັນສັບ ບໍ່ສູ້ໄດ້ໃຊ້ໃນພາສາປາກເວົ້າ ໃນປັດຈຸບັນ. ໂຕຢ່າງ ໃນສານລຶບພະສູນ[4]: ກ່ອມຈຽງໃນຄວາມໝາຍການຮ່ວມເພດ (ມັນ-ນົກ-ບໍ່ມີທີ່ຂ້ອງ ຂະໜັງຄອກຄາຫລັກ ສະໜ່ອຍນັ້ນ ຢູ່ທ່າງທົ່ງຜະລາກ່ອມຈຽງໃຈປີ້ມ. (ສລ.ໝ.77)). ປະເພດສັບ ທີ່ເປັນສັບບອກຖານະຕຳແໜ່ງຂອງຊັ້ນ ຄົນຊັ້ນສັງຄົມນັ້ນ : ນາຍນັກການ. ພະວັກ... ສັບທີ່ນຳມາຈາກພາສາອື່ນ ທີ່ມີການຕົກຫລົ່ນບາງສ່ວນ : ໂຍທິກາ ມີຄວາມໝາຍ ວ່າດອກລັດເກົ້າ (ໂຍທິກາຄ້ອມ ສາລະພີ ພວງພີ່ (ສລ.ໝ.70)), ແຕ່ເມື່ອເວົ້າເຖິງ ສະໜໍເຊິ່ງ ມາຈາກສັບ ໂຍທິກາ, ຜູ້ຂຽນກໍຍັງສຳຄັນ ຜິດ ຍ້ອນເຄີຍເຫັນເຄີຍໃຊ້ສັບ ໂຍທິກາ ຫລາຍ ຫລື ອາດເພື່ອປະໂຫຍດທາງສັນທະກະວີ ຈຶ່ງໃຊ້ ແລະ ຂຽນວ່າ ໂຍທິກາ.

ນ້ຳສະໝຸດເລິກ ແລະຕື້ນ ກວ້າງໃຫຍ່ເປັນກະແສ
ຍ່ອນໂຍນ ໂຍທິກາ ກໍຍັ່ງຖອງເຖິງໄດ້ (ສລ.ໝ79)

ຍິ່ງໄປກວ່ານັ້ນ ກໍຍັງມີປະເພດສັບຕັດພະຍາງ : ທິລາດ (ອະທິລາດ). ມັດສະການ (ນະມັດສະການ), ໂບດ(ອຸໂປສົດ), ດັ່ງສອນ (ສໍລະຍານ - ສອດສ່ອງເຫັນ) ໃນ:

---

[4] ໜັງສື ສານລຶບພະສູນກໍດີ ກາບເມືອງພວນກໍດີ ແລະ ພື້ນເມືອງວຽງກໍດີ ທີ່ຍົກໃນທີ່ນີ້ແມ່ນອ້າງຕາມສະບັບຄະນະຄົ້ນຄວ້າພາກວິຊາພາສາລາວ-ວັນນະຄະດີ

ສີໄວ ວອນກາເມ ມອບເວນວາງໃຫ້

ພະກໍທົ່ງ ສອນຮູ້ ຣົມແດດອມຣູບ (ສລ. ໜ. 76)

ສັບທາບ ຫລື ພະຍາງທາບ ຫລືເວົ້າອີກຢ່າງໜຶ່ງວ່າ ຍາບຄຳທີ່ໃຊ້ໃນການເນືອງສຽງດຶງຈັງຫວະ ເຊິ່ງມັກພົບເຫັນໃນກອນ ລຳຄອນສະຫວັນ :

| | |
|---|---|
| ຟັງເດີ ນັບແຕ່ອົມບໍລະລ່ອຍ | ອົມບໍລະລ່ອຍ |
| ສັງມາຊວຍຕັ້ງແຕ່ອ້າຍ | ບາຍແກ້ມຖືກແຕ່ນົມ |
| ຟັງເດີນັບແຕ່ | ອ້າຍແໜລະນີ້ບາ |
| ບົດລະບໍ ບໍ່ດີ | ໃຫ້ນາງຟັງ ບໍ ເອົາຂໍ້ |
| ຄັນສຽງຄໍບໍ່ດີ | ໃຫ້ນາງຟັງ ບໍ ເອົາໜ່ວຍ ( ໜ. 14)[5] |

ເຖິງວ່າ ບໍ່ສູ້ໃຊ້ຫລາຍໃນໜັງສື ແຕ່ກໍສ້າງບັນຫາບໍ່ໜ້ອຍເມື່ອພົບເຫັນ : ທະ ໃນ ທະເມົາໄພ້ ໂດຍສະເພາະເມື່ອມັນຖືສອງລັກສະນະຄືມີ ຫລື ບໍ່ມີຄວາມໝາຍ : ປະ ໃນ *ລົງທ່ອງທຽວບໍຄົມຄົນ ຄວ່າ ສູບສະແຫວງຫລິ້ນເລີຍລືນຊ້ຳ ປະສັດມົວເມົາເດືອດ* (ໜ. 69). ປະ ໃນທີ່ນີ້ ເປັນພະຍາງທາບ ຫລື ເປັນສັບໃນຄວາມໝາຍປະປ່ອຍ, ໃນຄວາມໝາຍທີ່ນຶ່ງ : ລົງໄປຫາປະຊາຊົນເພື່ອຢ່ອນສະໝອງ ແຕ່ກັບໂສກັບຮ້ອງໄຫ້ ທີ່ເຫັນປວງຊົນທຸກຮ້ອນ, ອັນທີ່ສອງ : ລົງໄປຫາປະຊາຊົນເພື່ອຢ່ອນສະໝອງ ແຕ່ຝືນລືນ ກໍເລີຍປ່ອຍໃຫ້ປະຊາທຸກຮ້ອນ ???..

**- ສຳນວນນິຍົມ ແລະ ສິນນິຍົມ ຂອງຄົນແຕ່ລະຍຸກ ຍ່ອມແຕກຕ່າງກັນ:** ການປະພັນບົດ ສະໄໝລ້ານຊ້າງ ໂດຍສະເພາະແມ່ນ ບົດທີ່ເປັນວັນນະຄະດີ ນິຍົມປະພັນເປັນກອນ. ມັກພັນລະນາຍືດຍາວ ເວົ້າເປັນຍາບເປັນເຕືອໃນການເດີນເລື່ອງ. ການເຊື່ອງເງື່ອນສະພາບຄວາມເປັນຈິງ ກັບສິ່ງອະພິນິຫານ ຕະຫລອດຮອດການໃຊ້ນາມສັນຍະລັກໃນທ້ອງເລື່ອງ ເປັນຄຸນລັກສະນະນຶ່ງ. ກວ່າຈະຈັບໃຈ ຄວາມໄດ້ ແລະເຂົ້າໃຈເລິກ ຜູ້ອ່ານກໍຕ້ອງໃຊ້ເວລາອ່ານລະອຽດ ມີຄວາມຮູ້ ໃນລະດັບອັນແນ່ນອນໃນ ຫລັກວິຊາທົ່ວໄປ ແລະ ຫລັກການປະພັນ ໂດຍສະເພາະແມ່ນຄຳພິອະລັງການ ຂອງຍຸກອັນເປັນບັນຫານຶ່ງ ທີ່ເຮັດໃຫ້ຄົນຍຸກນີ້ບໍ່ຄ່ອຍຢາກອ່ານໜັງສືເກົ່າໆ. ລັກສະນະແບບນີ້ ໄດ້ເຄີຍເຮັດໃຫ້ນັກຄົ້ນຄວ້າຍຸກນີ້ ຫລົງທິດ ຄິດວ່າໜັງສືບາງເລື່ອງເປັນເລື່ອງໄຮ້ສາລະໄປໝົດ. ໂຕຈິງ ຄວາມສັບສົນອັນນີ້ໄດ້ເກີດຂຶ້ນ ເມື່ອພວກເຮົາດຳເນີນການກ່າຍຖອດອັກສອນ

---

[5] ໝໍລຳ ພິມມະສອນ ແລະ ໝໍລຳບຸນຕອງ " ລຳຄອນສະຫວັນ ອອນຊອນເມືອງລາວ "

ພື້ນວຽງ (ທ້າວເຫລົາຄຳ). ພວກເຮົາໄດ້ພັກການ ເຍື່ອງນີ້ໄວ້ ຍ້ອນລັກສະນະໜັງສື ແລະ ຫັນມານຳສະເໜີເລື່ອງພື້ນວຽງ (ເຈົ້າອະນຸ) ແທນ ເມື່ອມີບັນ ຫາເລື່ອງທຶບ. ເລື່ອງທ້າວເຫລົາຄຳ ເປັນໜັງສືຖືລັກສະນະວັນນະຄະດີສູງ ເຊິ່ງ ພວກເຮົາຖືວ່າ ແມ່ນວັນນະຄະດີການເມືອງອີງປະຫວັດສາດ. ການຄົ້ນຄວ້າມັນຕ້ອງການເວລາເໝາະສົມ. ໄດ້ຂໍ້ມູນແອ້ມ ອ້ອມຂ້າງລະອຽດພໍຄວນ ແລະ ພໍມີທຶນຮອນ ສ່ວນໃດໜຶ່ງ ຈຶ່ງຈະໄດ້ພົບໃນລະດັບພໍເຂົ້າວັດເຂົ້າວາໄດ້. ເຮົາເອງຖືວ່າໃນຂະນະທີ່ເລື່ອງພື້ນວຽງ (ເຈົ້າອະນຸ) ເປັນເລື່ອງຈົບລົງຂອງວິລະຊົນແຫ່ງຊາດ ໃນຍຸກ ປະຫວັດສາດໜຶ່ງອັນແສນແສບ ແລະ ຈົດຈຳໄວ້ຕະຫລອດການ. ເລື່ອງພື້ນວຽງ (ເຫລົາຄຳ) ນັ້ນຜັດ ສະແດງໃຫ້ເຫັນຄວາມອະມະຕະຂອງຊາດ, ແມ່ນເມັດຈຸລັງແຫ່ງການສືບສານຢ່າງບໍ່ມີວັນສິ້ນສຸດຂອງ ເຜົ່າລາວ, ແມ່ນຄວາມໃຝ່ຝັນທີ່ຄວນໃຝ່ ແລະ ເປັນອຸດົມການສຸດແສນປະເສີດຄວນແກ່ການຍົກຍ້ອງ ເທີດທູນ ແລະ ສືບຕໍ່.

**- ຂາດການຕໍ່ເນື່ອງ ດ້ານສຶກສາຢ່າງເປັນລະບົບ:** ຍຸກຄຳຂອງໜັງສືລາວ ແມ່ນສະໄໝອານາຈັກລ້ານຊ້າງ. ໄລຍະແຫ່ງຄວາມເຊື່ອມໂຊມຂອງຊາດກິນເວລາຍາວພໍຄວນ ກ່ອນຈະຟື້ນໂຕມາ. ໃນໄລຍະດັ່ງກ່າວສະພາບການສຶກສາກໍຄືດ້ານອື່ນໆ ເປັນໄປຕາມມີຕາມເກີດ. ມີການຜັນແຍກ, ການຕິດຕໍ່ພົວພັນກັນກໍບໍ່ເປັນປົກກະຕິ, ການສຶກສາບໍ່ໄດ້ຮັບການປະຕິຮູບຢ່າງເປັນເອກະສັນ, ສຶກສາໄປຕາມເຂດໃຜ ຖິ່ນມັນ, ຄູອ້ອຍອາຈານເຈົ້າ ຕາມຄະຕິບັນຫາໜັງສືກ້ອມຕ່າງຄົນຕ່າງມີ. ເກີດການອະທິບາຍຄວາມຕາມໃຈມັກ ບໍ່ມີຫລັກ. ຄວາມຄາດເຄື່ອນຂອງຄວາມຄວາມຮູ້ຍ່ອມເກີດມີ, ຄວາມຮູ້ ຂາດເປັນປັ້ນ ຂາດຕອນ ແບບບໍ່ເປັນລະບົບບໍ່ເລິກບໍ່ກວ້າງ. ເວົ້າລວມແລ້ວ ຄວາມຮູ້ຕໍ່ກັບວິຊາຄວາມຮູ້ຂອງ ຊາວບູ ຮານຂອງພວກເຮົາແຄບ ບໍ່ພຽງພໍ, ບໍ່ທັນເວົ້າເຖິງການຈະແຕກສານຊອກເຫັນອັນໃໝ່. ການສຳຜັດບົດ ຫລື ເວົ້າງ່າຍໆ ກໍແມ່ນການອ່ານສຶກສາໜັງສືຂອງພວກເຮົາ ຍັງຢູ່ໃນວົງຈຳກັດ ຫລືໜ້ອຍເກີນໄປ. ເຫດການ ແລະສະພາບການທີ່ສະແດງອອກໃນບົດເປັນອັນຍາກຍິ່ງທີ່ຜູ້ເສບຊົມ ຈະອະທິບາຍໄດ້ຢ່າງເປັນລະບົບ. ເມື່ອເວົ້າເຖິງຍົດສັກຕຳແໜ່ງຂອງລະບອບປົກຄອງສັກດີນາ, ພວກເຮົາກໍຕ້ອງໄດ້ວິນຖາມ ກັນຢ່າງໃຫຍ່ ຫລື ແມ່ນແຕ່ສະມະນະສັກ, ຫລາຍຄົນທີ່ເຄີຍບວດຮຽນໃນວັດຫລາຍປີ ກໍອຳອຶ້ອຳອາດທີ່ ຈະໃຫ້ຄວາມກະຈ່າງແຈ້ງ. ຫລືບໍ່ກໍເກີດ ການໂຕ້ແຍງຖົກຖຽງກັນຕໍ່ເຫດການທີ່ຍົກຂຶ້ນມາໃນບົດ. ໃນທີ່ນີ້ຂໍຍົກເອົາບາງຕອນຂອງບົດກອນ ໃນສານລຶບພະສູນ ທີ່ພວກເຮົາຍົກຂຶ້ນມາຖົກຖຽງກັນ ດັ່ງນີ້ :

| | |
|---|---|
| ກັບກໍ່ຕັ້ງເຂດໄວ້ | ຫ້າຂວບພັນວັດສາ |
| ອານົບກົນກົນທາງ | ແຫ່ງມັນທະເມົາໄໝ້ (ສລ. ໜ. 71) |

(1) ທັດສະນະໜຶ່ງເຫັນວ່າ ໃນອາຍຸການຂອງພະພຸດທະສາດສະນາ ທີ່ຕັ້ງ ຫ້າພັນປີນັ້ນ ຖືກນາກອານົນ ໄດ້ກືນກິນມັນໃຫ້ໝົດໄປເປັນໄຈ້ໆ.
(2) ອີກທັດສະນະໜຶ່ງ ຜັດວ່າ ນັບໄດ້ຫ້າປີແລ້ວ ທີ່ນາກອານົນກືນກິນຫາງຂອງມັນເອງ

ທັດສະນະທີນຶ່ງ ແນ່ນອນ ແມ່ນທັດສະນະຂອງພັກຝ່າຍ ທີ່ໄດ້ຜ່ານການສຶກສາ ທາງພຸດທະສາສະໜາ, ຮູ້ຄວາມເປັນມາຂອງອາຍຸພຸດທະສາສະໜາ ແລະ ເລື່ອງນາກອານົນ ອັນເປັນນາກໜູນໂລກ ບອກການມາປ່ຽນແທນຂອງພະເຈົ້າອົງໃໝ່ ແລະ ການສ້ຽງໄປແຫ່ງອາຍຸສາສະໜາ ຂອງພະເຈົ້າອົງ ກ່ອນ; ສ່ວນທັດສະນະທີສອງ ໜັກໄປໃນທາງເນື້ອໃນບົດ ຖືວ່າ ພັນ ແມ່ນການຜັນສຽງພ້ຽນໄປຂອງພະ, ນາກອານົນແມ່ນກຸ່ມຄົນລາວ, ມັນໃນວັກທີສອງ ແມ່ນແທນໃຫ້ນາກອານົນ ບໍ່ແມ່ນແທນໃຫ້ ເວລາອ້າງເທິງ ດັ່ງໃນມະຕິທີນຶ່ງ,

ເມື່ອມີສະພາບຄືທີ່ກ່າວອ້າງເທິງ, ຄວາມຫຍຸ້ງຍາກອື່ນກໍຕາມມາ. ໃນການດຳເນີນການຄົ້ນຄວ້າ, ຜູ້ຄົ້ນຄວ້າສ່ວນໃຫຍ່ຈະເລີ່ມຈາກສູນ ອັນເນື່ອງຈາກຂາດລະບົບການຈັດ ແລະສະພາບສະໜັບສະໜູນ ດ້ານເຫດການ ໃນພັນທະພາບຖັນແຖວບົດ. ພັດທະນາການ, ຂະບວນວິວັດຂອງໜັງສື, ການຈັດປະເພດ, ການແບ່ງຍຸກ ແລະ ອື່ນໆ ກ່ຽວກັບໜັງສື ລ້ວນແຕ່ເປັນບັນຫາທັງມວນ. ເຖິງວ່າມີໜັງສືຈຳນວນໜຶ່ງ ໄດ້ຮັບການຍອມຮັບວ່າ ແຕ່ງໂດຍຜູ້ນີ້ ຂຽນໃນປີນັ້ນ: ແຕ່ກໍບໍ່ທັນເປັນທີ່ໂລ່ງໃຈເຕັມປ່ຽມໄດ້ເທື່ອ, ຕາມມາດ້ວຍບັນຫາ ພູມສະຖານ ທີ່ສະແດງອອກໃນບົດ. ເວລາດຳເນີນການສຶກສາບົດກາບເມືອງພວນ ປາກົດວ່າ ໄດ້ມີຄວາມສົງໄສ ການສຳຄັນຜິດຂອງຜູ້ແຕ່ງກາບ ຕໍ່ນາມພູມສະຖານ : ກິ່ວຫຍ້າຄັງໂພນ ເປັນກິ ຫຍ້າຄັງໂຫມ (ພ/ໝ. 52) ອັນເນື່ອງຈາກຜູ້ແຕ່ງ ບໍ່ແມ່ນຄົນທ້ອງຖິ່ນ ຫລືບໍ່ກໍເປັນການສະກົດຄຳຕົກ. ຜ່ານການສຶກສາສົມທຽບ ແລະ ສືບຖາມຄົນທ້ອງຖິ່ນຊາວພວນ ເຫັນວ່າຄຳທີ່ຜູ້ກ່າຍອອກນັ້ນ ແມ່ນບໍ່ ຖືກຕາມທີ່ຄວນເປັນແທ້.

**ບັນຫາເລື່ອງການສຶກສາ ຫລັກເກນປະດິດແຕ່ງ:** ທິດສະດີ ດ້ານວັນນະຄະດີ ເຊັ່ນການຂົບບັນຫາການຕີບົດ... ຕາມແບບບູຮານ ກໍມີໜ້ອຍຄົນຮູ້. ເພິ່ນຖອດກອນເປັນຄຳທຳມະດາແນວໃດ, ການຕີຄວາມ ແລະ ຕີລາຄາບົດທີ່ເປັນບັນຫາແນວໃດ, ການຮຽນຮູ້ເອົາແຕ່ທິດສະດີໃໝ່ໆມາເບິ່ງບັນຫາ ໃນວັນນະຄະດີແຕ່ກ່ອນ ຍັງບໍ່ເປັນທີ່ພຽງພໍແກ່ການຄົ້ນຄວ້າ. ເຮົາບໍ່ຮູ້ກົດການແຕ່ງຂອງເພິ່ນ ກໍບໍ່ຕ່າງຫຍັງກັບການຊົມກິລາ ທີ່ເຮົາບໍ່ຮູ້ກະຕິກາ, ແລະເມື່ອບໍ່ເຂົ້າໃຈເພິ່ນຜູ້ແຕ່ງ, ບໍ່ເຂົ້າໃຈບົດທີ່ພວມເສບ ເຫດໃດຊິເຫັນໄດ້ ອັນດີອັນອ່ອນ, ເມື່ອດຳເນີນການສຶກສາໜັງສື ການຖອດຄວາມຈາກບົດກອນ ກໍແມ່ນໜຶ່ງໃນບັນຫາ ທີ່ພວກເຮົາພົບຂໍ້ຫຍຸ້ງຍາກ. ປາກົດວ່າ ການເຂົ້າໃຈບົດກອນ ບໍ່ແມ່ນເຂົ້າໃຈເປັນຕອນໆໄດ້ ມັນຮຽກຮ້ອງໃຫ້ພວກເຮົາ ມີຄວາມ ຮູ້ສັງລວມ

ແລະ ເຂົ້າໃຈມັນເປັນລະບົບໃນໝົດທັງບົດ, ໂຕຢ່າງ ພວກເຮົາກໍຍາກຈະລົງມະຕິຕໍ່ສຳນວນກອນ ຕໍ່ໄປນີ້ ວ່າ ເສືອລ້ຽງລູກຮ່ວມກັບແມວ ຫລື ເສືອມອບລູກໃຫ້ແມວລ້ຽງ :

ໂອນໍ ມາຍິນສົບເທດ້ວຍ ດອມປາຊີວຊີຊື້ນເງືອກ ຄືລີ
ເສືອ ຫາກວາງລູກໃຫ້ ພຽນລ້ຽງພໍ່າແມວ ດອກນາ (ສລ. ໜ. 85)

**ສ້າງເງື່ອນໄຂ:**

ເລັງໃສ່ບັນຫາການປຸງເນື້ອບົດ, ການໃຊ້ພາຫະນະການສິ່ງສື່ທີ່ເໝາະ ແລະບັນຫາເສີມ ທີ່ມີຄວາມສຳຄັນບໍ່ ນ້ອຍຢ່າງໜຶ່ງ ນັ້ນຄືການໂຄສະນາ.

- ປາກົດວ່າ ທາງການໄດ້ບັນຈຸວິຊາພາສາ - ວັນນະຄະດີລາວ ເຂົ້າໃນຫລັກສູດການສຶກສາແຫ່ງຊາດ ມາຕະຫລອດ: ມີແຕ່ດຽວນີ້ ຕ້ອງສືບຕໍ່ການບັບປຸງຫລັກສູດນີ້ ໃຫ້ແທດເໝາະ ແລະມີຄຸນນະພາບ ດີຂຶ້ນ.

**ການຊຳຣະ ແລະປັບປຸງບົດ:** ໜັງສືສະໄໝກ່ອນ ເພິ່ນນິຍົມຂຽນດ້ວຍອັກສອນທຳ ຫລື ບໍ່ກໍອັກສອນລາວເດີມ, ອັກສອນເຫລົ່ານັ້ນ ຄົນລາວປັດຈຸບັນສ່ວນໃຫຍ່ອ່ານບໍ່ໄດ້. ເພື່ອຢາກເຜີຍແຜ່ໜັງສືດັ່ງກ່າວ ມີຄວາມຈຳເປັນ ຕ້ອງໄດ້ຊຳຣະ ແລະ ປັບປຸງບົດ. ວຽກງານດ້ານນີ້ ອາດເຮັດໃນຫລາຍລະດັບ :

- ດຳເນີນການຄັດຊຳຣະ ກ່າຍຖອດອັກສອນພິມໜັງສືເກົ່າ ແລະ ຈັດພິມເຜີຍແຜ່. ແຕ່ບົດທີ່ນຳອອກ ເຜີຍແຜ່ ຄວນມີບົດສະເໜີ ອາດເປັນບົດນຳ ບົດວິຈານ ແລະ ຄວນມີແປປະມວນສັບ ຍາກຢູ່ທ້າຍ ເຫລັ້ມ ໃນຂະນະທີ່ບໍ່ທັນມີວັດຈະນານຸກົມສະເພາະ ສະເພາະຢ່າງຍິ່ງ ແມ່ນບົດທີ່ນຳເຂົ້າສຶກສາເປັນໂຕແບບ ໃນໂຮງ ຮຽນຂັ້ນຕ່າງໆ ຄວນໄດ້ສຶກສາຄົ້ນຄວ້າຮອບດ້ານ ທັງຮູບການ (ຮູບແບບໜັງສື, ແບບສັນທະລັກ, ໂຄງເລື່ອງ ເນື້ອເລື່ອງ ສິນລະປະການໃຊ້ສັບ, ມາດແຕ່ງ ແລະ ວາດປະດິດ ແຕ່ງ) ແລະ ເນື້ອໃນ (ທັງທີ່ເປັນກະທູ້ບົດ ແລະ ຂໍ້ປີກຍ່ອຍ)),

- ການປຸງບົດ ໃຫ້ມີຫລາຍຮູບຫລາຍສີ ເຊັ່ນ ຂຽນໃນຮູບໃໝ່ ບັນຍາກາດໃໝ່ (ນະວະນິຍາຍ...) ບົນພື້ນຖານສັບ ແລະໂຄງເລື່ອງເກົ່າໂດຍມີການດັດປັບບາງສ່ວນ ຕາມຄວາມເໝາະສົມ, ຫລື ບໍ່ກໍອາດ ສ້າງເປັນບົດລະຄອນໂຮງຮຽນ, ລະຄອນໂທລະທັດ, ພະຍາຍາມນຳໃຊ້ທ່າດີ ພາຫະນະການສື່ທີ່ທັນສະໄໝ ເຂົ້າຮັບໃຊ້ເປັນເຄື່ອງເຜີຍແຜ່ ແລະວິທີການອື່ນໆ ທີ່ເຫັນເໝາະຄວນ, ຈັດການປະກວດການຫຍໍ້ເລື່ອງ ຫລື ການປຸງບົດ.

ດຳເນີນການໂຄສະນາເຜີຍແຜ່ ສະເໜີມວນຊົນໃຫ້ເຫັນຄວາມສຳຄັນຂອງໜັງສືຍຸກດັ່ງກ່າວ. ຈັດງານນິທັດສະການ ແລະປາຖະກາຖາ ກ່ຽວກັບຄວາມສຳຄັນຂອງໜັງສື. ຖອດໃຈຄວາມສຳຄັນ ອອກໂຄສະນາຜ່ານວາລະສານ, ໜັງສືພິມ ຫຼືເຮັດເປັນຄຳຂວັນຕິດຕາມສະຖານທີ່ຕ່າງໆ ທີ່ເໝາະສົມ ໂດຍບອກແຫຼ່ງທີ່ກຳກັບໄວ້.

ຮຽນຮູ້ວິທີການປະດິດແຕ່ງ. ຮູບແບບການແຕ່ງ, ສຶກສາ ແລະເສັງການອ່ານໜັງສື ຕາມແບບສະບັບຂອງບູຮານ ແລະ ຊອກວິທີການປັບປຸງໃຫ້ເໝາະກັບຍຸກ.

ສຶກສາວິທີການຖອດກອນເປັນຄຳທຳມະດາ, ການຂົບບັນຫາ ການຕີຄວາມ ແລະການຕີລາຄາບົດທັງຕາມແບບມູນເຊື້ອ ແລະ ສະໄໝໃໝ່.

ສະໜອງຄວາມຮູ້ອັນເປັນພື້ນຖານ ດ້ານຫຼັກວິຊາ ຄວາມເຊື່ອ ແລະອຸດົມການຂອງຄົນຍຸກນັ້ນ ໂດຍສະເພາະບັນຫາທີ່ກ່ຽວພັນອັນມັກປາກົດ ຫຼືສ່ອງອອກໃນບົດ.

ສຶກສາປະຫວັດຄຳ ໃຫ້ຮູ້ທີ່ມາ ຄວາມປ່ຽນແປງຂອງຄຳ ທັງທີ່ເປັນຄຳລາວລ້ວນ ແລະຄຳທີ່ນຳມາຈາກພາສາຕ່າງປະເທດ. ຄວາມຮູ້ດ້ານນີ້ ປາກົດວ່າ ຕາມຫຼັກສູດໃນລະຍະຫຼັງໆນີ້ ບໍ່ໄດ້ເອົາໃຈໃສ່ເທົ່າທີ່ຄວນ. ພ້ອມດຽວກັບນັ້ນ, ການສຶກສາເຖິງການໃຊ້ ແລະລັກສະນະສະເພາະຂອງຄຳສັບ, ສຳນວນ ກໍຄວນໄດ້ຄຳນຶງຫາ.

ສ້າງວັດຈະນານຸກົມສະເພາະ ທັງວັດຈະນານຸກົມອະທິບາຍຄວາມ (ລາວແປລາວ) ແລະ ວັດຈະນານຸກົມສອງພາສາ: ລາວ-ອັງກິດ, ອັງກິດ-ລາວ ຫຼື ລາວ-ພາສາອື່ນໆ ທີ່ເຫັນຈຳເປັນ. ການເຮັດວຽກນີ້ໄດ້, ນອກຈາກອຳນວຍຄວາມສະດວກແກ່ຜູ້ເສບບົດ ແລ້ວຍັງຈະເປັນບ່ອນວິພາກວິຈານ ເພື່ອ ກ້າວໄປຫາຄວາມຊັດເຈນຂອງສັບນັ້ນໆ ຜ່ານການຄົ້ນຄິດ ສຶກສາຂອງຜູ້ຄົ້ນຄວ້າ ໂຕຢ່າງ ເມື່ອພົບສັບ ອຸທຸມພອນ ແປວ່າ ດອກບົວ ໃນເລື່ອງ ທ້າວຮຸ່ງທ້າວເຈືອງ ເຫຼັ້ມທີ 1 ແລະ ອຳພາແປວ່າ ຕົ້ນພ້າວ ໃນ ເລື່ອງດຽວກັນ ເຫຼັ້ມ 2 ເຮົາກໍຕະລຶງວ່າ ເພິ່ນແປຜິດ, ຕົກ ຫຼື ໂຕຮູ້ຈຳກັດ ເພາະເຄີຍຮູ້ແຕ່ ອຸດທຸມພອນ : ຕົ້ນໝາກເດື່ອ, ອຳພາ: ຕົ້ນມ່ວງ. ພ້ອມນັ້ນ ຍັງຈະຊ່ອຍໃຫ້ຄົນຮຸ່ນໃໝ່ຮູ້ເຫັນຄວາມອຸດົມຮັ່ງມີຂອງສັບ ແລະ ຈະຮູ້ວ່າ ນີ້ແມ່ນຂອງໂຕນັ້ນແມ່ນ ຂອງເພິ່ນ, ບໍ່ຫຼົງຂອງໂຕເປັນຂອງເພິ່ນ.

ສ້າງເງື່ອນໄຂໃຫ້ນັກສຶກສາ ນັກວິຊາການນຳໃຊ້ສັບ ແລະ ປັ່ນສະພາບທາງວາດນິຍົມ ທີ່ມີໃນໜັງສືສະໄໝລ້ານຊ້າງ ນີ້ ໃຫ້ເປັນອັນທັນສະໄໝ.

**ສະຫລຸບ:**

ສະພາບການສືບທອດມໍລະດົກທີ່ດີ ເປັນຄວາມມຸ່ງຫວັງຂອງຄົນຮຸ່ນກ່ອນ ແລະຄວາມຕ້ອງການຂອງຄົນຜູ້ຈະສືບທອດ. ການສົ່ງຄ່ຽນ ແລະສືບທອດແນວໃດ ເປັນບັນຫາສິ່ງຜົນໃຫ້ວຽກງານການ ສືບທອດ. ການທີ່ໄດ້ຮັບສຳຜັດ, ຮູ້ຄ່າ ແລະຊຶ້ງຄ່າຄວາມມີປະໂຫຍດ ຂອງສິ່ງທີ່ໄດ້ສຳຜັດຈະເຮັດໃຫ້ຜູ້ ສຳຜັດຢາກຫຼືບໍ່ ກໍຄັດເລືອກຊາບຊຶມ ແລະ ດັ້ນສືບ. ຄວາມກັງວົນຂອງຄົນເຮົາໃນປັດຈຸບັນ ຕໍ່ບັນຫາ ການສືບ ສານມໍລະດົກນັ້ນສ່ວນໃຫຍ່ແນໃສ່ໂຕຜູ້ຈະສືບທອດຫຼາຍເກີນໄປ, ຄວາມຈິງ, ບັນຫາສຳຄັນ ແມ່ນກະໂຕສິ່ງທີ່ຈະສືບ ສານເປັນຕົ້ນເຫດ, ຫາແມ່ນຜູ້ທີ່ຈະສືບສານດອກໄດ໋. ຄັນບໍ່ມີມໍລະດົກ ແລະ ຄວາມສຳຄັນຂອງມໍລະດົກ ຈະໄປກ່າວເຖິງຜູ້ຈະໄປສືບທອດເພື່ອອີ່ຫຍັງ; ແລະ ເມື່ອຜູ່ຈະສືບ ບໍ່ມີຄວາມພໍໃຈປະສົງສືບ ໃນສິ່ງຈະສືບ, ການກ່າວເຖິງການສືບ ກໍເປົ່າປະໂຫຍດ ບໍ່ແມ່ນດອກຫວະ.

ໜັງສືເກົ່າຂອງລາວເຮົາ ໂດຍສະເພາະ ແມ່ນໜັງສືທີ່ແຕ່ງ ແລະລິດຈະນາຂຶ້ນໃນສະໄໝອານາຈັກລ້ານຊ້າງ ເອກະພາບນັ້ນ ເປັນຄັງໜັງສືທີ່ລ້ຳຄ່າແຫຼ່ງໜຶ່ງຂອງຊາດເຮົາ ສະໄໝອານາຈັກລ້ານຊ້າງແມ່ນຍຸກຄຳຂອງລາວ, ວັດທະນະທຳອິນເດຍ ໄດ້ເຂົ້າມາມີອິດທິພົນສູງໃນສັງຄົມລາວ. ສາດສະໜາພຸດຖືບົດບາດເປັນໂຕສື່ສຳຄັນ ໃນການດຳເນີນໜ້າທີ່ນີ້, ຄຳສອນຂອງພຸດທະສາດສະໜາ ໄດ້ຊຶມເລິກເຂົ້າຈິດໃຈຂອງຊາວລາວ, ວັນນະຄະດີສະໄໝນີ້ສ່ວນໃຫຍ່ ຈະເປັນວັນນະຄະດີສາດສະໜາ, ພາສາລາວໄດ້ຮັບການພັດທະນາໃຫ້ອຸດົມສົມບູນ ແລະ ເຈຽລະໄນໃຫ້ງົດງາມ ແຈ່ມໃສທັງທາງດ້ານຄັງສັບ ແລະ ວາດວາທະສິນ. ວົງການການສຶກສາລາວ ປັດຈຸບັນກໍໄດ້ຂຸ້ນຂ້ຽວສຶກສາບົດເລື່ອງຕ່າງໆ ຈາກວັນນະຄະດີສະໄໝນີ້ເພື່ອພັດທະນາພາສາ ແລະວັນນະຄະດີແຫ່ງຊາດ ໃນການແປບົດເລື່ອງ. ຫລັກທິດສະດີວິທະຍາສາດໃໝ່ໆຂອງໂລກ ເພື່ອເຜີຍແຜ່ແກ່ອະນຸຊົນລາວນັ້ນ ນັກປາດ ອາຈານ ກໍອີງໃສ່ຄຳສັບລາວສະໄໝນີ້. ວັນນະຄະດີສະໄໝນີ້ ໄດ້ພັດທະນາວັນນະຄະດີສະໄໝກ່ອນຂຶ້ນສູ່ຈຸດສູງສຸດ ແລະ ກາຍເປັນແມ່ແຮງພື້ນຖານສຳຄັນ ໃຫ້ແກ່ການພັດທະນາ ວັນນະຄະດີສະໄໝໃໝ່ຂອງລາວ. ນັກຄົ້ນຄວ້າທັງລາວ ແລະ ຕ່າງປະເທດ ທີ່ໃຝ່ສຶກສາ ວັນນະຄະດີລາວໃຫ້ເລິກເຊິ່ງ ຈຶ່ງຈຳເປັນຕ້ອງໄດ້ສຶກສາມັນ. "ພວກເຮົາມີໜັງສື ໝາຍວ່າ ພວກເຮົາມີ ມໍລະດົກທາງດ້ານວັດທະນາທຳຢ່າງໜຶ່ງ[6]. ໜັງສືທີ່ມີນີ້ ເປັນໜັງສືທີ່ເກີດໃນສະໄໝທີ່ ປະເທດຊາດເຮົາມີຄວາມຈະເລີນຮຸ່ງເຮືອງ ແລະ ແມ່ນຍຸກຄຳຂອງວັນນະຄະດີລາວ. ແຕ່ເປິງນັ້ນມາເຖິງສະໄໝນີ້ ເປັນໄລຍະເວລາທີ່ຍາວນານພໍຄວນ. ໃນຍ່ານຄາວອັນຍາວນານນັ້ນ ຜັດເປັນໄລຍະເວລາທີ່ຊາດລາວ ຕົກສູ່ພາວະ

[6] ບົວລີ ປະພາພັນ, ວັນນະຄະດີລາວໂດຍສັງເຂບ ມະຫາວິທະຍາໄລການສຶກສາຕ່າງປະເທດ. ໂຕກຽວ. 2003. ໜ້າ 2.

ແຫ່ງຄວາມຂຸດສັກເສື່ອມສິຣອບດ້ານ. ການສຶກສາບໍ່ພຽງແຕ່ ບໍ່ໄດ້ ຮັບການພັດທະນາ, ຫາກຍັງຂາດເປັນບັ້ນຂັ້ນເປັນຕອນ. ບັນຫາຕາມມາ ກໍຄື ລະດັບການສຶກສາຂອງຄົນໂດຍໂຮມແມ່ນຕ່ຳ, ຂາດພື້ນຖານຄວາມຮູ້ດ້ານພາສາສາດ, ລົດນິຍົມ ໂດຍສະເພາະ ສິລະປະທາງພາສາ ກໍຜັນປ່ຽນໄປ ສົມໃສ່ຍຸກນີ້ ຍຸກທີ່ພວກເຮົາຟື້ນໂຕ, ຜັດເປັນຍຸກໂລກາພິວັດ, ຍຸກໄຮເທັກ ເຊິ່ງໃຜໆ ກໍເມົາຮີບຮ້ອນແລ່ນນຳສະພາບທີ່ປ່ຽນແປງຢູ່ຕະຫລອດເວລາ, ຟ້າວຟັ່ງໃນການເສາະສະແຫວງຫາຈຸດຈັບ ເພື່ອຍຶດທ່າເປັນເຈົ້າການສ້າງຜົນປະໂຫຍດດ້ານເສດຖະກິດແກ່ຕົນ ໃຫ້ລົງໂຕຢູ່ໄດ້ ແລະພັດທະນາຕໍ່ໄປ.

ສະພາບປັດຈຸບັນ ຮຽກຮ້ອງໃຫ້ພວກເຮົາຕ້ອງໄດ້ປັບປຸງດັດແປງ ຮັບເອົາທຸກບັນຫາ ໃຫ້ແທດເໝາະ ແລະໄປໄດ້ກັບສະພາບ: ບໍ່ດັ່ງນັ້ນ ຈະເສຽຫວັງ, ຫລ້າຫລັງ ຫລື ເປັນດ້ອຍ. ການທີ່ຈະຫາໂອກາດມາ ເຕົ້າໂຮມກັນນັ່ງຟັງການອ່ານໜັງສືຕາມວັດ ຫລື ບຸນເຮືອນຄືຄາວກ່ອນນັ້ນ ເປັນການຍາກຍິ່ງ ໂດຍສະເພາະໃນສັງຄົມໂຕເມືອງ. ແນ່ນອນ ວ່າຮູບການເສບໜັງສືແບບນັ້ນເໝາະກັບສະພາບຄວາມ ເປັນຈິງຂອງສັງຄົມຍຸກນັ້ນເຊິ່ງຄົນຮູ້ໜັງສືມີໜ້ອຍ, ຈຳນວນສະບັບໜັງສືກໍມີຈຳກັດ ຍ້ອນພາຫະນະ ໃນການຜະລິດ ແລະເຂົາເຈົ້າມີເວລາພໍ. ຄົນດຽວນີ້ ເຮັດວຽກງານແຂ່ງເວລາ, ສ້າງປະໂຫຍດໃຫ້ໄດ້ຫລາຍ ໃນເວລາອັນສັ້ນທີ່ສຸດເທົ່າທີ່ສັ້ນໄດ້. ການເສບໜັງສືກໍດັ່ງດຽວ ສຸມຊອກເອົາຈຸດສຳຄັນ ໃຊ້ເວລາສັ້ນໆ, ສັ້ນ ແລະ ໄວເທົ່າໃດຍິ່ງດີ. ຄວາມຈິງຢ່າງໜຶ່ງ ທີ່ທຸກຄົນຄວນຍອມຮັບກໍຄື ຈະແມ່ນຄົນຍຸກກ່ອນ ຫລື ຍຸກນີ້ ລ້ວນແຕ່ມີຄວາມຕ້ອງການພອກພູນສະຕິປັນຍາ ແລະຄວາມສຸກທາງໃຈ ຕ່າງແຕ່ວ່າ ລະດັບ ແລະ ວິທີການເສບ, ແລະໃຫ້ຄວາມສຳຄັນ. ເວລານີ້ການອ່ານ ໂດຍສະເພາະປະເພດໜັງສືຍາວໆ ແລະມີລັກສະນະ ພັນລະນາ, ນອກຈາກມີບັງຄັບ ໃນຫລັກສູດຫລື ກໍລະນີໃດໜຶ່ງ, ຄືຈັ່ງວ່າໄດ້ ຫລຸດໜ້ອຍຖອຍລົງ ຫັນມານິຍົມການຟັງ ແລະ ເບິ່ງ ຄືໃນສະ ໄໝກ່ອນແຕ່ຢູ່ໃນລັກສະນະທີ່ກ້າວໜ້າກວ່າ ຄືຜ່ານຮູບການປະດິດແຕ່ງ ແບບໃໝ່ ແລະ ພາຫະນະທີ່ທັນ ສະໄໝກວ່າ.

ຈາກເຫດຜົນດັ່ງກ່າວມາ ມັນໄດ້ບົ່ງບອກໃຫ້ເຫັນວ່າ ໂຕບົດ (ເນື້ອໃນໜັງສື) ແລະ ພາຫະນະອັນເປັນເຄື່ອງມືໃນການຜັນບົດ ແລະສິ່ງສື່ ມີບົດບາດສຳຄັນໃນຂະບວນການເສບບົດ ຢາກສົ່ງບົດທີ່ຕ້ອງການສົ່ງກໍຕ້ອງປັບປຸງບົດນັ້ນໃຫ້ເປັນທີ່ສົນໃຈ, ມີປະໂຫຍດສຳຫລັບຜູ່ຈະຮັບ. ເທົ່ານັ້ນຍັງບໍ່ພໍ ສິ່ງສຳຄັນ ຍັງຕ້ອງໄດ້ເລືອກບົດ ຄືຢ່າລືມວ່າ ບໍ່ໝາຍວ່າໜັງສືເກົ່າທຸກເລື່ອງ ຈະເໝາະສົມ ແລະມີປະໂຫຍດຕໍ່ພວກເຮົາ ໃນປັດຈຸບັນໝົດ. ພາຫະນະທີ່ຈະນຳສານເຖິງຜູ່ຮັບ ເພື່ອປະໂຫຍດໃນການສືບທອດ ກໍຕ້ອງໃຫ້ແທດເໝາະ ແລະທັນຍຸກກ່າວຄື ພະຍາຍາມນຳໃຊ້ ສິ່ງທີ່ສັງຄົມ ພວມນິຍົມເປັນເຄື່ອງມື ດຳເນີນງານ ໃຫ້ເກີດຜົນປະໂຫຍດສູງສຸດ, ຢ່າຄິດຕ້ານ ຫລື ຢັ້ງລໍ ການນຳທ່າດີຂອງສິ່ງແປກໃໝ່ເຫລົ່ານັ້ນ ເຂົ້າມາ ໃຊ້ເປັນພາຫະນະໃຫ້ເຮົາ.

ລວມຄວາມແລ້ວ ຢາກໃຫ້ເປົ້າໝາຍສືບທອດ ສືບທອດ ສິ່ງທີ່ເຮົາຕ້ອງການໃຫ້ສືບ ກໍຄືຕ້ອງປັບປຸງສິ່ງສືບໃຫ້ເປັນສິ່ງທີ່ດີ, ເປັນສິ່ງຕ້ອງການ ແລະ ມີປະໂຫຍດ: ສ້າງພາຫະນະສິ່ງສືບໃຫ້ແທດເໝາະ ແລະ ທັນສະໄໝ ເພື່ອດຶງດູດ ເກາະຍຶດ ຜູ່ເຮົາປະສົງໃຫ້ສືບທອດ. ໝາຍຄວາມວ່າ ສຳຫລັບຄວາມຕ້ອງການ ຢາກໃຫ້ໜັງສືອັນເປັນຄັງຄວາມຮູ້ ອັນເປັນມໍລະດົກແຫ່ງຊາດ ເຂົ້າເຖິງຄົນຮຸ່ນໃໝ່ ຮຸ່ນຄົນສືບທອດນັ້ນ ມັນຮຽກຮ້ອງໃຫ້ທັນບົດ ໃຫ້ເປັນບົດທັນສະໄໝ, ອາດສ້າງເປັນບົດລະຄອນໂຮງຮຽນ, ວິທະຍຸ ຫລື ໂທລະທັດ, ສ້າງເລື່ອງເຂົ້າວີດີໂອ, ດີວີດີ... ນອກຈາກນັ້ນ ກໍຈັດລາຍການນິເທດໜັງສືເກົ່າ, ຈັດປະກວດ ການອ່ານຕາມລາຍ ແລະ ທຳນອງຕ່າງໆ. ປະກວດການປຸງໜັງສື... ເພື່ອກ້າວໄປເຖິງຈຸດໝາຍ. ພາກສ່ວນມີໜ້າທີ່ຮັບຜິດຊອບ ຄວນສ້າງຂະບວນການ, ຊອກແຫລ່ງທຶນສະໜັບສະໜູນ ເພື່ອຊອກຮູ້ ດູເຫັນ ຜູ່ສະຫງວນມັກໃນວຽກນີ້ ແທນການລໍໃຫ້ເປັນໄປຕາມມີ ຕາມເກີດ.

## <u>ເອກະສານອ້າງອີງ</u>

### <u>ພາສາລາວ</u>

1. ເກນ (ທ້າວ). *ແບບຮຽນຊັ້ນມັທຍົມສຶກສາ - ບົດອ່ານປະສົມ*, ຮັບຮອງດ້ວຍກະຊວງສຶກສາທິການ, ພິມເທື່ອທີສອງ, ໂຮງພິມແສງສິນ ບາງກອກປະເທດໄທ, ພ. ສ. 2503, ຄ. ສ. 1960.
2. ຄຳແພງ ເກດຕະວົງ, *ໄວຍາກອນລາວ ແລະ ວັນນະຄະດີລາວ*, (ປະມວນບົດຮຽນສຳຫລັບສະຖາບັນກົດໝາຍ ແລະ ການປົກຄອງ, ສະຖາບັນອຸດົມສຶກສາວິຊາຄູ (ພະແນກອາຈານລາວ) ແລະໂຮງຮຽນນາຍຮ້ອຍທະຫານ ໃນໄລຍະ 1967-73) ກະຊວງສຶກສາທິການ. 1968
3. ພູມີ ວົງວິຈິດ, *ຄວາມຊົງຈຳຂອງຊີວິດເຮົາ ໃນຂະບວນວິວັດແຫ່ງປະຫວັດສາດ ຂອງປະເທດ ລາວ,* ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ກະຊວງສຶກສາ, ວິສາຫະກິດການພິມຈຳ ໜ່າຍສຶກສາ,ພິມຄັ້ງທີ່ 1, 1987
4. ສີລາ ວິລະວົງ *(ມະຫາ), ແບບແຕ່ງກອນ (ໄທວຽງຈັນ) ແລະກາບສານວິລາສີນີ,* ສະມາຄົມສິ່ງປື້ມຮູບ ເດັກນ້ອຍລາວແຫ່ງປະເທດຍີ່ປຸ່ນ, ພິມຄັ້ງທີ 1, ໂຮງພິມໃຜ່ໜາມ, 1994.
5. ຄະນະຄົ້ນຄວ້າ ພາກວິຊາພາສາລາວ - ວັນນະຄະດີ, *ກາບເມືອງພວນ,* ມະຫາວິທະຍາໄລແຫ່ງຊາດວຽງຈັນ, ວິສາຫະກິດໂຮງພິມສຶກສາ, 2001.
6. ຄະນະຄົ້ນຄວ້າພາກວິຊາພາສາລາວ-*ວັນນະຄະດີ, ສານລຶບພະສູນ,* ມະຫາວິທະຍາໄລ ແຫ່ງຊາດວຽງຈັນ. ວິສາຫະກິດໂຮງພິມສຶກສາ. 2002.

7. ຄະນະຄົ້ນຄວ້າ ພາກວິຊາພາສາລາວ - *ວັນນະຄະດີ, ລາຍງານການຄົ້ນຄວ້າ ພື້ນວຽງ,* ມະຫາວິທະຍາໄລແຫ່ງຊາດ ວຽງຈັນ. ຕົ້ນສະບັບ - ກຽມຈັດພິມ.

8. ລຳຄອນສະຫວັນ (Chant alternes de cour d'amour du Laos) par Molam Phimmasone et Bountong, Texte billingue Francais - Lao Traduit par Lamvieng INTHAMONE (Maitre de conferences a L'INALCO - Paris).

9. ສີລາ ວິລະວົງ (ມະຫາ), ປະໂຫຍດວັນນະຄະດີ, ຫໍສະໝຸດແຫ່ງຊາດ, ພິມຄັ້ງທີ່ 2, ໃຜ່ໜາມການພິມ, 1996.

10. *ບົວລີ ປະພາພັນ, ວັນນະຄະດີລາວ* ໂດຍສັງເຂບ (ສຳຫລັບຄົນຕ່າງປະເທດ), ມະຫາວິທະຍາໄລການສຶກສາຕ່າງປະເທດ ນະຄອນໂຕກຽວ. 2003.

11. ຫລັກສູດພາສາລາວ ວັນນະຄະດີລາວ, ຜະແນກອາຈານລາວ, ສະຖາບັນອຸດົມສຶກສາວິຊາ ຄູ, ມະຫາວິທະຍາໄລສີສະຫວ່າງວົງ.

12. ຫລັກສູດພາສາລາວ ວັນນະຄະດີລາວ, ສະຖາບັນກົດໝາຍການປົກຄອງແຫ່ງຊາດ, ມະຫາວິທະຍາໄລສີສະຫວ່າງວົງ.

13. ຫລັກສູດພາສາລາວ ວັນນະຄະດີລາວ, ໂຮງຮຽນນາຍຮ້ອຍທະຫານຈີ່ນາຍໂມ້, ມະຫາວິທະຍາໄລສີສະຫວ່າງວົງ.

14. ຫລັກສູດວັນນະຄະດີລາວ ພາສາສາດ ພະແນກວັນນະຄະດີ - ພາສາລັດເຊຍ, ມະຫາວິທະຍາໄລສ້າງຄູວຽງໄຊ.

15. ຫລັກສູດພາສາລາວ ວັນນະຄະດີລາວ, ພາກວິຊາພາສາລາວ - ວັນນະຄະດີ, ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ,

16. ສີລາ ວິລະວົງ, *ມະຫາກາບ ທ້າວຮຸ່ງທ້າວເຈືອງ,* ອະທິບາຍຖອດຄວາມໂດຍ ດວງເດືອນ ແລະຄະນະ, ເຫລັ້ມທີ່ 1, ຫໍສະໝຸດແຫ່ງຊາດ, ພິມຄັ້ງທີ 1, ເຄເອສ ການພິມ. ບໍ່ແຈ້ງປີພິມ

17. ສີລາ ວິລະວົງ, *ມະຫາກາບທ້າວຮຸ່ງທ້າວເຈືອງ,* ອະທິບາຍຖອດຄວາມໂດຍ ດວງເດືອນ ແລະຄະນະ, ເຫລັ້ມທີ 2, ພາກວິຊາພາສາລາວ - ວັນນະຄະດີ ມະຫາວິທະຍາໄລແຫ່ງຊາດ, ພິມຄັ້ງທີ 2, ບໍລິສັດດອກເກດ ຈັດພິມຈຳກັດ, 2003.

ພາສາໄທ

18. ບຸນເຫລືອ ເທບສຸວັນ ( ມ.ລ. ), *ແວ່ນວັນນະກຳ* - ລວມບົດຄວາມ, ສຳນັກພິມອ່ານໄທ, ພິມຄັ້ງແຣກ,ໂຮງພິມເທບປະທານພອນ, ບາງກອກ, ພ.ສ. 2529. ( ພາສາໄທ )
19. ຍຸທະສັດ ບຸນສະນິດ, ວັນວິຈານ, ໂຄງການບໍລິການວິຊາການ ມະຫາວິທະຍາໄລ ສີນະຄະລິນວິໂລດ ພາກໃຕ້, ພິມຄັ້ງທີ່ 1 ສິງຫາຄົມ ພ. ສ. 2538. ( ພາສາໄທ )
20. ຈາລຸວັນ ທຳມະວັດ *ວັນນະກຳທ້ອງຖິ່ນອີສານ - ລ້ານຊ້າງ,* ຫໍສະໝຸດກາງ ສະຖາບັນວິຊາການບໍລິການຈຸລາລົງກອນມະຫາວິທະຍາໄລ, ມະຫາວິທຍາໄລມະຫາສາລະຄາມ (ພາສາ ໄທ) ບໍ່ແຈ້ງປີພິມ

ພາສາຫວຽດນາມ

21. Ha Minh Duc - Le Ba Han,Co so ly luan van hoc, NXB Dai Hoc va Trung Hoc Chuyen Nghiep, Hanoi, 1985.
22. Phuong Luu, Tiep nhan van hoc, Trung tan dao tao tu xa Dai hoc Hue, (Du an "Ho tro hoc tu xa Viet - Bi" ), NXB Giao Duc, 1997.

ພາສາອັງກິດ

23. Paul Maas, Textual Criticism, (translated from the German by Barbara Flower, Clarendon Press, Oxford), 1958.